




# ພຣະສັນຍາ ແລະ ແຜນການສ້າງອາຄານ



Lesson 10 for September 6, 2025



"ໂມເຊຈຶ່ງໄດ້ນຳຂໍ້ຄຳສັ່ງ ແລະ ກົດຕ່າງໆຂອງອົງພຣະຜູ້ເປັນເຈົ້າໄປບອກປະຊາຊົນ ແລະ ປະຊາຊົນທຸກຄົນໄດ້ຕອບພ້ອມກັນວ່າ ພວກເຮົາຈະເຮັດທຸກສິ່ງຕາມທີ່ອົງພຣະຜູ້ເປັນເຈົ້າໄດ້ກ່າວ' "

**ອພຍ 24:3,**

ຫລັງຈາກປະກາດພຣະບັນຍັດສິບປະການ ແລະ ກົດຕ່າງໆໃຫ້ແກ່ໂມເຊ ແລ້ວ, ພຣະອົງກໍ່ມີພຣະປະສົງທີ່ຈະເຮັດພັນທະສັນຍາກັບຊົນຊາດອິດສະຣາເອນ.

ພັນທະສັນຍາແມ່ນລຽບງ່າຍ: ເຮົາຈະເປັນພຣະເຈົ້າຂອງເຈົ້າ, ເຮົາຈະປົກປ້ອງເຈົ້າ ແລະ ອວຍພຣະພອນເຈົ້າ; ພວກເຈົ້າ ຈົ່ງເຊື່ອຟັງເຮົາ.



ຫລັງຈາກຂຽນພັນທະສັນຍາລົງໃນມ້ວນໜັງສືແລ້ວ, ທັງສອງຝ່າຍຕ້ອງໄດ້ໃຫ້ສັນຍາວ່າຈະປະຕິບັດ. ປະຊາຊົນກໍ່ໃຫ້ສັນຍາວ່າຈະຮັກສາພັນທະສັນຍານັ້ນໄວ້. ແລ້ວພຣະເຈົ້າຮັກສາສັນຍາແບບໃດ? ດ້ວຍພຣະໂລຫິດ; ດວ້ຍງານລ້ຽງ; ແລະໂດຍໃຫ້ແບບຢ່າງການປະຕິບັດ ເພື່ອຊ່ວຍໃຫ້ພວກເຂົາເຂົ້າໃຈເຖິງພັນທະສັນຍາ.



**ພັນທະສັນຍາ:**

- ໂລຫິດແຫ່ງພັນທະສັນຍາ (ອພຍ 24:1-6, 8)
- ການປະຕິບັດຕາມພັນທະສັນຍາ (ອພຍ 24:7)
- ຄາບອາຫານ ແຫ່ງພັນທະສັນຍາ (ອພຍ 24:9-18)

**ຮູບແບບ:**

- ຈຸດປະສົງຂອງແບບແຜນ (ອພຍ 25:1-9)
- ການກະກຽມສໍາລັບການສ້າງແບບແຜນ(ອພຍ 31:1-18)


ພັນທະສັນຍາ
"WHAT GOD SAYS WE WILL DO"
© Baptist Bible Graphics

# ພຣະໂລຫິດແຫ່ງພັນທະສັນຍາ

ແລ້ວໂມເຊກໍ່ໄດ້ເອົາເລືອດໃນຊາມ ຊິດໃສ່ປະຊາຊົນແລະກ່າວວ່າ ອັນນີ້ແມ່ນເລືອດແຫ່ງພັນທະສັນຍາທີ່ອົງພຣະຜູ້ເປັນເຈົ້າຕັ້ງໄວ້ກັບພວກເຈົ້າ ເມື່ອພຣະອົງມອບພັນທະສັນຍານີ້ໃຫ້.' " (ອພຍ 24:8)





ພັນທະສັນຍາໄດ້ຖືກສ້າງຂຶ້ນໃນຮູບແບບໃດ?

1. ພັນທະສັນຍາໄດ້ຖືກອ່ານ (ອພຍ. 24:3a)
2. ປະຊາຊົນຕອບຮັບຢ່າງກະຕືລືລົ້ນ (ອພຍ. 24:3b)
3. ພັນທະສັນຍາຖືກຂຽນບັນທຶກໄວ້ (ອພຍ. 24:4a)
4. ແທ່ນເຜົາບູຊາຖືກສ້າງຂຶ້ນ (ອພຍ . 24:4b)
5. ເສົາຫີນ 12 ຕົ້ນ ຖືກສ້າງຂຶ້ນ (ອພຍ. 24:4c)
6. ການເຜົາຖວາຍບູຊາເລີ່ມຕົ້ນຂຶ້ນ (ອພຍ. 24:5)
7. ເລືອດເຄິ່ງໜຶ່ງຖືກຊິດໃສ່ແທ່ນເຜົາບູຊາ (ອພຍ. 24:6)
8. ນໍາພັນທະສັນຍາອ່ານໃຫ້ປະຊາຊົນຟັງອີກເທື່ອໜຶ່ງ (ອພຍ. 24:7a)
9. ປະຊາຊົນຕອບສະໜອງຢ່າງກະຕືລືລົ້ນອີກຄັ້ງ (ອພຍ. 24:7b)
10. ເລືອດທີ່ເຫລືອຢູ່ເຄິ່ງໜຶ່ງນັ້ນ ແມ່ນຊິດໃສ່ປະຊາຊົນ (ອພຍ. 24:8a)
11. ໂມເຊປະກາດວ່າ ນັ້ນແມ່ນ "ພຣະໂລຫິດແຫ່ງພັນທະສັນຍາ" (ອພຍ. 24:8b; ມທ. 26:28)
12. ລັດງານລ້ຽງເພື່ອສະເຫລີມສະຫລອງພັນທະສັນຍາ (ອພຍ. 24:9-11)



ພຣະອົງຊົງຍອມຮັບອິດສະຣາເອນໃນຖານະ ຊົນຊາດ (12 ຕະກູນ); ພຣະອົງຊົງເຫັນຄຸນຄ່າຂອງຊາວໜຸ່ມ; ແລະ ພຣະອົງຊົງອຸທິດພຣະອົງເອງກັບແຕ່ລະຄົນ ເປັນລາຍບຸກຄົນ (ໂດຍຊົງຊິດພຣະໂລຫິດຂອງພຣະອົງເທິງຫົວຂອງພວກເຂົາ).

ພຣະອົງຊົງປາຖະໜາທີ່ຈະມີຄວາມສໍາພັນກັບພວກເຮົາ ທັງແບບສ່ວນຕົວ ແລະ ແບບຊຸມຊົນຜູ້ເຊື່ອຖື

# ອະທິບາຍເພີ່ມເຕີມ

ໂມເຊໄດ້ເອົາເລືອດຂອງສັດທີ່ຖືກຖວາຍບູຊາໃຫ້ແກ່ພຣະເຈົ້າໃນການເຮັດພິທີ

-ພຣະໂລຫິດ ຫລື ເລືອດນັ້ນບໍ່ແມ່ນເລືອດຂອງພຣະເຈົ້າ,

ພຣະໂລຫິດແມ່ນຕົວແທນຂອງພັນທະສັນຍາທີ່ພຣະອົງມີຕໍ່ຊົນຊາດອິດສະຣາເອນ
ແລະ ເລືອດກໍ່ແມ່ນສັນຍາລັກຂອງສິ່ງທີ່ມີຊີວິດທຸກໆສິ່ງ (ລບລວ 17:11)
ແຕ່ໂມເຊເອີ້ນພຣະໂລຫິດນັ້ນວ່າ “ພຣະໂລຫິດ ແຫ່ງພັນທະສັນຍາ ທີ່ພຣະເຈົ້າຊົງສ້າງ” ເພາະວ່າ ພຣະ
ໂລຫິດນັ້ນແມ່ນເຄື່ອງໝາຍທີ່ມີຊີວິດ ລະຫວ່າງພຣະເຈົ້າ ກັບປະຊາຊົນຂອງພຣະອົງ

ໃນຍຸກຂອງພຣະເຢຊູ, ພຣະອົງໄດ້ໃຊ້ຄຳເວົ້າດຽວກັນຄືກັບໃນພັນທະສັນຍາເດີມຄື:
“ນີ້ແຫລະແມ່ນເລືອດຂອງເຮົາ ເຊິ່ງເປັນເລືອດແຫ່ງພັນທະສັນຍາຂອງພຣະເຈົ້າ ທີ່ຫລັ່ງໄຫລອອກສຳ
ລັບຄົນຈຳນວນຫລາຍ ເພື່ອຄວາມຜິດບາບຈະໄດ້ຮັບການອະໄພ.” ມັດທາຍ 28:28

# ການປະຕິບັດຕາມພັນທະສັນຍາ

"ແລ້ວເພິ່ນກໍອ່ານໜັງສືພັນທະສັນຍາ ດ້ວຍສຽງດັງສູ່ປະຊາຊົນຟັງ ພວກເຂົາຕ່າງກໍເວົ້າວ່າ ພວກຂ້ານ້ອຍທັງໝົດ ຈະ
ເຊື່ອຟັງອົງພຣະຜູ້ເປັນເຈົ້າ ແລະ ຈະເຮັດທຸກໆສິ່ງຕາມທີ່ພຣະອົງໄດ້ສັ່ງໄວ້" (ອພຍ 24:7)



ດ້ວຍຄວາມລິງໃຈຢ່າງທີ່ສຸດ, ປະຊາຊົນໄດ້ໃຫ້ຄໍາໝັ້ນສັນຍາວ່າຈະຮັກສາພັນທະສັນຍາ. ແຕ່ວ່າຄໍາສັນຍານີ້ຢູ່ໄດ້ບໍ່ດົນ (ອພຍ . 32:8).

ຄົນລຸ້ນຖັດມາກໍ່ໃຫ້ຄໍາໝັ້ນສັນຍາແບບດຽວກັນວ່າຈະຮັກສາພັນທະສັນຍາ (ຢຊ. 24:18b). ແຕ່ໂຢຊວຍໄດ້ເຕືອນພວກເຂົາຢ່າງຈັດເຈນວ່າ: "ແຕ່ພວກເຈົ້າບໍ່ອາດຈະບົວລະບັດຮັບໃຊ້ພຣະເຈົ້າຢາເວໄດ້ດອກ" (ຢຊ. 24:19).

ແມ່ນຫຍັງຂັດຂວາງພວກເຮົາຈາກການເຊື່ອຟັງພຣະເຈົ້າ,ເຖິງວ່າເຮົາຈະມີເຈດຕະນາດີກໍ່ຕາມ?



ໂດຍທໍາມະຊາດແລ້ວ ພວກເຮົາບໍ່ເຊື່ອຟັງ (ໂຣມ. 7:18), ແລະ ພວກເຮົາກໍ່ບໍ່ສາມາດເຮັດຫຍັງເພື່ອປ່ຽນແປງອຸປະນິໄສຂອງພວກເຮົາໄດ້ (ໂຣມ. 7:24).





ແຕ່ຖ້າພວກເຮົາຍອມໃຫ້ພຣະອົງປ່ຽນແປງ, ພຣະອົງສາມາດປ່ຽນນິໄສຂອງພວກເຮົາໄດ້(ອຊກ. 36:26-27). ພຣະອົງຊົງຊໍາລະ, ຂະຈັດສິ່ງບໍ່ດີອອກໄປ, ມອບນິໄສໃໝ່, ແລະ ເມື່ອເຮົາອ່ອນແຮງເມື່ອໃດ ເຮົາກໍເຂັ້ມແຂງຂຶ້ນເມື່ອນັ້ນ. (2 ກຣທ. 12:10).

# ຄາບອາຫານ ແຫ່ງພັນທະສັນຍາ

"ໂມເຊ, ອາໂຣນ, ນາດາບ, ອາບີຮູ ແລະ ບັນດາຫົວໜ້າເຈັດສິບຄົນຂອງຊາດອິດສະຣາເອນ ຈຶ່ງພາກັນຂຶ້ນໄປເທິງພູ" (Exodus 24:9, 11b)



ດັ່ງທີ່ພວກເຮົາເຫັນໃນຕົວຢ່າງຂອງຢາໂຄບ ແລະ ລາບານ, ໃນຍຸກບູຮານທາງຕາເວັນອອກ ການໃຫ້ສັນຍາຈະມີການກິນອາຫານ ທີ່ທັງສອງຝ່າຍໄດ້ຮ່ວມກັບຮັບປະທານ (ປຖມກ. 31:44-54).



ທີ່ພູເຂົາຊີນາຍ, ພຣະອົງຊົງມອບ"ຄາບອາຫານແຫ່ງພັນທະສັນຍາ" ໃຫ້ແກ່ 74 ຄົນ: ໂມເຊ, ອາໂຣນ, ນາດາບ, ອາບີຮູ ແລະ ຜູ້ປົກຄອງອີກ 70 ຄົນ, ເຊິ່ງເປັນຕົວແທນຂອງປະຊາຊົນທັງໝົດ (ອພຍ. 24:9-11).

ເມື່ອພຣະເຢຊູຊົງສະຖາປະນາພັນທະສັນຍາໃໝ່, ພຣະອົງກໍ່ຊົງເຮັດແບບນັ້ນເຊັ່ນກັນ ໂດຍກິນອາຫານຮ່ວມກັບອັກຄະສາວົກ 12 ຄົນ(ມທ. 26:26-28).

ທຸກໆຄັ້ງທີ່ພວກເຮົາຮ່ວມຮັບປະທານອາຫານຄາບສຸດທ້າຍກັບພຣະອົງ, ໝາຍເຖິງພວກເຮົາໄດ້ຕໍ່ອາຍຸພັນທະສັນຍາທີ່ມີກັບພຣະເຈົ້າຂຶ້ນອີກ ໂດຍການຮັບປະທານເຂົ້າຈີ່ ແລະ ເຫລົ້າອາງຸ່ນ (1 ກຣທ. 11:26).



ເຖິງວ່າພວກເຂົາຈະປະຕິເສດຄວາມລອດຢ່າງເຖິງທີ່ສຸດ , ບໍ່ວ່າຈະເປັນ ນາດາບ, ອາບີຮູ ຫລື ຢູດາ ກໍ່ບໍ່ໄດ້ຖືກແຍກອອກຈາກຄາບອາຫານນີ້ "ຄາບອາຫານແຫ່ງພັນທະສັນຍາ."

# ຂໍ້ຄິດເພີ່ມ

ນາດາບ, ອາບີຮູ ແລະ ຢູດາແມ່ນມີຄວາມຄ້າຍຄືກັນເຊັ່ນ:

ນາດາບ ແລະ ອາບີຮູ ໄດ້ຖືກເລືອກໃຫ້ເປັນປະໂລຫິດ ເຊິ່ງໃກ້ຊິດກັບພຣະເຈົ້າ ແຕ່ພວກເຂົາໄດ້ເຮັດບາບໂດຍນໍາເອົາໄຟທີ່ບໍ່ບໍຣິສຸດມາຖວາຍພຣະເຈົ້າ ເພາະພຣະອົງບໍ່ໄດ້ສັ່ງພວກເຂົາແບບນັ້ນ, ສ່ວນຢູດາ ແມ່ນໜຶ່ງໃນສາວົກຂອງພຣະເຢຊູ ແຕ່ລາວໄດ້ ທັກທລັງພຣະອົງໃນຄາບອາຫານແຫ່ງພັນທະສັນຍາ.

ສະຫລຸບພວກເຂົາທັງສາມ ແມ່ນຜູ້ທີ່ພຣະເຈົ້າຊົງເລືອກ ແລະ ພວກເຂົາໄດ້ມີໂອກາດໃກ້ຊິດກັບພຣະອົງ ແຕ່ພວກເຂົາບໍ່ໄດ້ເຊື່ອຟັງພຣະອົງ

ແລ້ວພວກເຮົາເດ? ພວກເຮົານະມັດສະການພຣະອົງ ຕາມແບບຂອງພວກເຮົາ ຫລື ຕາມແບບທີ່ພຣະອົງຊົງຢາກໃຫ້ພວກເຮົາປະຕິບັດ?

ແມ່ນຫຍັງທີ່ເປັນ “ໄຟທີ່ບໍ່ບໍຣິສຸດ” ທີ່ພວກເຮົານໍາມາຖວາຍໃຫ້ກັບພຣະອົງ ແລະ ເຮັດໃຫ້ພຣະອົງໃຈຮ້າຍ ຄືກັບ ນາດາບ ແລະ ອາບີຮູ?

ພວກເຮົານະມັດສະການພຣະອົງລົງລັງຫລາຍປານໃດໃນແຕ່ລະມື້ ຫລື ເປັນພຽງພິທີ?



# ຮູບແບບ

# ຈຸດປະສົງຂອງແບບແຜນ

"ຊາວອິດສະຣາເອນຕ້ອງສ້າງຫໍເຕັນສຳລັບເຮົາ ເພື່ອວ່າເຮົາຈະຢູ່ທ່າມກາງພວກເຂົາ" (ອພຍ 25:8)



ເພື່ອເປັນຫລັກປະກັນວ່າພຣະອົງຈະຊົງເຮັດຕາມພັນທະສັນຍາຂອງພຣະອົງ, ພຣະອົງຈຶ່ງຕັດສິນໃຈທີ່ຈະໄປປະທັບຢູ່ທ່າມກາງປະຊາຊົນ.



ແຕ່ວ່າບໍ່ມີຜູ້ໃດທີ່ຈະເຫັນໜ້າພຣະອົງແລ້ວມີຊີວິດຢູ່ໄດ້ (ອພຍ. 33:20). ເພາະສະນັ້ນພຣະອົງຈຶ່ງສັ່ງໃຫ້ພວກເຂົາສ້າງສະຖານນະມັດສະການຂຶ້ນເພື່ອທີ່ພຣະອົງຈະໄດ້ສຳແດງການມາປະທັບຂອງພຣະອົງໄດ້. ການປະທັບຂອງພຣະອົງນີ້ປາກົດເປັນສັນຍາລັກ ເນື່ອງຈາກພຣະອົງບໍ່ໄດ້ປະທັບຢູ່ໃນວິຫານໃດໆໃນໂລກນີ້ (ກລກ 17:24 ).





ໂມເຊໄດ້ເຫັນແບບຢ່າງ ແລະ ໄດ້ຮັບຄຳແນະນຳຢ່າງສະເພາະເຈາະຈົງໃນການກໍ່ສ້າງ. ແລະ ໄດ້ຮັບການຮ້ອງຂໍປະຊາຊົນໃຫ້ບໍຣິຈາກວັດສະດຸທີ່ຈຳເປັນ (ອພຍ. 25:2-7).

ທັງສະຖານນະມັດສະການ ແລະ ພຣະວິຫານທີ່ໂຊໂລໂມນສ້າງຂຶ້ນ ລ້ວນເປັນແບບຢ່າງຂອງສະຖານນະມັດສະການໃນສະຫວັນ(ຮລ. 8:1-2; 1ກສ. 8:27, 30).

ການສ້າງສະຖານນະມັດສະການ ຫລື ສະຖານທີ່ສັກສິດຖືກສ້າງຂຶ້ນໂດຍຄວາມຮ່ວມມື ແລະ ການບໍລິຈາກຊັບສິນຂອງປະຊາຊົນ.



# ການກະກຽມ ສຳລັບການສ້າງແບບແຜນ

"ເຮົາໄດ້ເລືອກເອົາເບຊາເລນ ລູກຊາຍຂອງອຸຣີ ແລະ ຫລານຊາຍຂອງຮູເຣຈາກເຜົ່າຢູດາ, ໃຫ້ໄດ້ຮັບຣິດອຳນາດຂອງເຮົາ, ເຮົາໄດ້ໃຫ້ລາວມີສະຕິປັນຍາ, ຄວາມເຂົ້າໃຈ ແລະ ຄວາມສາມາດໃນວິຊາການດ້ານສິລະປະກຳທຸກຢ່າງ" (Exodus 31:2-3)



ເຖິງວ່າພຣະເຈົ້າຈະປະທານຄຳສັ່ງຢ່າງລະອຽດທີ່ກ່ຽວກັບການກໍ່ສ້າງໃຫ້ແກ່ໂມເຊແລ້ວ, ພຣະອົງບໍ່ໄດ້ບອກລາຍລະອຽດທຸກໆຢ່າງ. ວ່າຕ້ອງເປັນແບບໃດເຊັ່ນ: ມຶງກຸດຂອງປະໂລຫິດ, ຫລັກຕະກຽງ...ແຕ່ໃຫ້ພຣະວິນຍານບໍຣິສຸດຊົງເຮັດວຽກຮ່ວມກັບພວກເຂົາໃນການກໍ່ສ້າງ

ສຳລັບລາຍລະອຽດເຫລົ່ານີ້ ພຣະວິນຍານບໍຣິສຸດຊົງປະທານຂອງປະທານພິເສດ:

- ເບຊາເລນ, ຜູ້ກຳກັບໂຄງການທັງໝົດ (ອພຍ. 31:2)
- ໂອໂຮລີອາບ, ຜູ້ເປັນຜູ້ຊ່ວຍຫລັກ (ອພຍ. 31:6a)
- ຄົນອື່ນໆທີ່ຈະເຂົ້າມາຊ່ວຍໃນວຽກງານ (ອພຍ. 31:6b)



ທ່າມກາງຄຳສັ່ງສຳລັບການກໍ່ສ້າງສະຖານນະມັດສະການ ຫລື ສະຖານສັກສິດ ມີການກ່າວເຖິງວັນສະບາໂຕເປັນພິເສດ (ອພຍ. 31:12-17). ແລ້ວວັນສະບາໂຕກ່ຽວຂ້ອງຫຍັງກັບສະຖານທີ່ນະມັດສະການ?

ຄວາມບໍຣິສຸດ ແມ່ນກະແຈທີ່ສຳຄັນ. ໃນການທີ່ຈະເຂົ້າເຝົ້າພຣະເຈົ້າຜູ້ບໍຣິສຸດ, ພວກເຮົາຄວນຈະບໍຣິສຸດຄືກັບພຣະອົງ. ແລະ ວັນສະບາໂຕກໍ່ຄືສັນຍາລັກຂອງຄວາມບຊຣິສຸດນັ້ນເຊັ່ນກັນ (ອພຍ. 31:13; ອຊກ. 20:12, 20).

“ໃນການສ້າງສະຖານສັກສິດເພື່ອເປັນທີ່ປະທັບຂອງພຣະເຈົ້າ, ໂມເຊໄດ້ຊົງສ້າງສິ່ງຕ່າງໆຕາມແບບແຜນໃນສະຫວັນ ທີ່ພຣະເຈົ້າຊົງມອບໃຫ້. ພຣະອົງຊົງຮຽກເອີ້ນໂມເຊໃຫ້ຂຶ້ນໄປທີ່ພູເຂົາ , ແລະ ຊົງເປີດເຜີຍໃຫ້ລາວເຫັນເຖິງສິ່ງຕ່າງໆທີ່ຢູ່ໃນສະຫວັນ , ເພາະເຫດນີ້ ສິ່ງຕ່າງໆຈຶ່ງໄດ້ຖືກສ້າງຂຶ້ນ. .

ສໍາລັບຊົນຊາດອິດສະຣາເອນແລ້ວ ສະຖານສັກສິດພຣະອົງຊົງປາຖະໜາທີ່ຈະໃຫ້ເປັນທີ່ປະທັບຂອງພຣະອົງເພື່ອເປີດເຜີຍອຸດົມຄະຕິອັນຮຸ່ງເຮືອງໃຫ້ແກ່ພວກເຂົາ [...].”

EGW (Education, p. 35-36)